

ບົດຮຽນທີ 10
ສຳລັບສະບາ
ໂຕທີ 5
ກັນຍາ 2026

# ພັນທະກິດທີ່ແທ້ຈິງ ຂອງຄຣິສຕຽນ


ພວກເຮົາຖືກຄວາມທຸກລຳບາກຮອບດ້ານ, ແຕ່ຍັງບໍ່ເຖິງຂັ້ນຂັດສົນ; ຈົນປັນຍາ, ແຕ່
ຍັງບໍ່ໝົດທາງອອກ; ຖືກຂົ່ມເຫັງ, ແຕ່ບໍ່ຖືກປະຖິ້ມ; ຖືກຕີລົ້ມລົງ, ແຕ່ກໍຍັງບໍ່ເຖິງ
ຂັ້ນເສຍຊີວິດ; 2 ກຣທ 4:8-10

ໃຜເວົ້າວ່າ ການຊີວິດການເປັນສາສະໜາຈານມີຊີວິດທີ່ສະບາຍ? ການປະກາດຂ່າວປະເສີດ ມີຄວາມຮັບຜິດຊອບທີ່ຍິ່ງໃຫຍ່, ແລະ ຄວາມພະຍາຍາມນັ້ນກໍ່ປາສະຈາກຄວາມສ່ຽງບໍ່ໄດ້.

ມີຄວາມຮັກຕໍ່ຈິດວິນຍານທີ່ກໍາລັງຈະສູນຫາຍໄປ, ເບິ່ງແຍງ ແລະ ກໍ່ສ້າງສໍາລັບຜູ້ທີ່ຈິດວິນຍານມີຂ່າວປະເສີດຢູ່ແລ້ວ ໃຫ້ເຂັ້ມແຂງຂຶ້ນ, ນີ້ແມ່ນສິ່ງທີ່ແຍກຜູ້ຮັບໃຊ້ທີ່ແທ້ຈິງ ອອກຈາກໝາປ່າໃນໂລກນີ້



ເມື່ອຄຣິດຕະຈັກເຮັດວຽກຮ່ວມກັບຜູ້ຮັບໃຊ້ ແລະ ເຮັດການປ່ຽນແປງທີ່ສໍາຄັນໃນວິຖີຊີວິດຂອງຕົນເອງ, ຄຣິດຕະຈັກກໍ່ຈະກາຍເປັນອົງປະກອບແຫ່ງການປອງດອງທີ່ມອບຄວາມສຸກ ແລະ ຄວາມສະບາຍໃຈໃຫ້ກັບທຸກໆຄົນ



- ວຽກງານຂອງສາສະໜາຈານ
  - ຜູ້ຮັບໃຊ້ທີ່ມີສັກກະຍະພາບ
  - ຄວາມສ່ຽງຂອງພັນທະກິດ
- ໜ້າທີ່ຂອງສະມາຊິກ
  - ທູດແຫ່ງການຄືນດີປອງດອງ
  - ການຮຽກເອີ້ນສູ່ຄວາມບໍຣິສຸດ
- ຜົນລັບຂອງຄວາມພະຍາຍາມ ຮ່ວມກັນ
  - ຄວາມສະບາຍ ແລະ ຄວາມຍິນດີ

# ວຽກງານຂອງສາສະໜາຈານ



# ຜູ້ຮັບໃຊ້ທີ່ມີສັກກະຍະພາບ

“ແມ່ນພວກເຈົ້າເອງທີ່ເປັນໜັງສືແນະນຳຕົວຈາກພວກເຈົ້າບໍ?” (2 ກຣທ 3:2)



ບາງສິ່ງບໍ່ໄດ້ປ່ຽນແປງໄປຫລາຍເມື່ອເວລາຜ່ານໄປ. ຈົດໝາຍຄຳແນະນຳຍັງຄົງເປີດປະຕູສູ່ໂອກາດໃນປະຈຸບັນ, ດັ່ງທີ່ພວກເຂົາໄດ້ເຮັດໃນສະຕະວັດທຳອິດ. ແລ້ວ ອາຈານໂປໂລ ຈຳເປັນຕ້ອງມີຈົດໝາຍແນະນຳເພື່ອໄດ້ຮັບການຍອມຮັບຈາກຄຣິດຕະຂັກໃນເມືອງ ໂກຣິນໂທ ຫລືບໍ່? (2 ກຣທ 3:1)



ເພິ່ນມີຈົດໝາຍທີ່ດີທີ່ສຸດຢູ່ໃນມື ນັ້ນກໍ່ຄື: ຊາວໂກຣິນໂທເອງ (2 ກຣທ 3:2). ຈິດໃຈຂອງພວກເຂົາຖືກປ່ຽນແປງໂດຍພຣະຄຸນຂອງພຣະເຈົ້າ, ຜ່ານການເທດສະໜາຂອງອັກຄະທູດ ແລະ ຜູ້ຮ່ວມງານຂອງເພິ່ນ (2 ກຣທ 3:3).



ອຈ ໂປໂລ ແລະ ຜູ້ຊ່ວຍຂອງເພິ່ນແມ່ນ “ເປັນຜູ້ຮັບໃຊ້ພັນທະສັນຍາໃໝ່” (2 ກຣທ 3:6). ພັນທະສັນຍາອັນຮຸ່ງເຮືອງ ຂຽນໂດຍພຣະວິນຍານ ເທິງຫົວໃຈເພື່ອຊີວິດນິຣັນດອນ



ແຕ່ບາງຄົນຕິດຕາມພັນທະສັນຍາອື່ນ, ເຊິ່ງເປັນຄວາມລອດໂດຍການກະທຳຕາມພັນທະສັນຍາທີ່ຈາລຶກໄວ້ໃນແຜ່ນຫີນ, ເຊິ່ງເຮັດໃຫ້ພວກເຂົາເບິ່ງບໍ່ເຫັນເຖິງພຣະຄຸນ (2 ກຣທ 3:7-9).

# ຄວາມສ່ຽງຂອງພັນທະກິດ

"ເພາະວ່າສິ່ງສາລະພັດນັ້ນເປັນໄປເພື່ອຜົນປະໂຫຍດຂອງເຈົ້າທັງຫລາຍ ເພື່ອວ່າເມື່ອພຣະຄຸນມາເຖິງຄົນເປັນຈຳນວນຫລວງຫລາຍ ກໍຈະມີການໂມທະນາຂອບພຣະຄຸນຫລາຍຂຶ້ນ ເໝືອນກັນ ຈຶ່ງເປັນການຖວາຍພຣະກຽດຕິຍົດແດ່ພຣະເຈົ້າ." (2 ກຣທ 4:15)

ອຈ ໂປໂລເຂົ້າໃຈເຖິງຄວາມອົດທົນ ແລະ ຄວາມສ່ຽງຂອງການຮັບໃຊ້. ແຕ່ເພິ່ນຮູ້ວ່າຄວາມສ່ຽງນີ້ມັນຄຸ້ມຄ່າ ແລະ ເພິ່ນກໍ່ຍອມຮັບແບກມັນດ້ວຍຄວາມຮັກຕໍ່ທຸກຄົນທີ່ຍອມຮັບເອົາຄວາມລອດ, (2 ກຣທ 4:15). ຍິ່ງໄປກວ່ານັ້ນ ເພິ່ນຍັງໝັ້ນໃຈໃນຄວາມຊ່ວຍເຫລືອຈາກພຣະເຈົ້າ (2 ກຣທ 4:7-9):

| ພວກເຮົາແມ່ນ | ແຕ່ວ່າ |
|---|---|
| ລຳບາກ | ບໍ່ຖືກບີບ |
| ສັບສົນ | ບໍ່ໝົດຫວັງ |
| ຖືກຂົ່ມເຫັງ | ບໍ່ຖືກປະຖິ້ມ |
| ຖືກໂຈມຕີ | ບໍ່ຖືກທຳລາຍ |

ຂ່າວປະເສີດຖືກປະກາດຜ່ານທາງມະນຸດຜູ້ອ່ອນແຮງ ເພື່ອພຣະສິຣິຈະໄດ້ເປັນຂອງພຣະເຈົ້າພຽງຜູ້ດຽວ

ຄວາມທຸກຍາກນັ້ນ ເປັນສິ່ງເລັກນ້ອຍ ເຊິ່ງເປັນພຽງສິ່ງຊົ່ວຄາວ ເມື່ອທຽບກັບ "ສະຫງ່າຣາສີອັນຍິ່ງໃຫຍ່ນິຣັນດອນ" ທີ່ພວກເຮົາຈະໄດ້ຮັບໃນວັນທີ່ພຣະຄຶດມາ (2 ກຣທ 4:14-18).





# ໜ້າທີ່ຂອງການເປັນສະມາຊິກ

# ທູດແຫ່ງການຄືນດີ ປອງດອງ

ສິ່ງທັງໝົດນີ້ ແມ່ນເກີດມາຈາກພຣະເຈົ້າ ຜູ້ຊົງໂຜດໃຫ້ພວກເຮົາຄືນດີກັບພຣະອົງໂດຍທາງພຣະຄຣິດ ແລະ ພຣະອົງກໍໄດ້ມອບໝາຍ ພາລະກິດນີ້ໃຫ້ແກ່ພວກເຮົາ ເພື່ອເຮັດໃຫ້ຄົນອື່ນຄືນດີກັບພຣະອົງເໝືອນກັນ(2 ກຣທ 5:18)





ແຮງຜັກດັນທີ່ຄວບຄຸມຊີວິດຂອງຄຣິດຕະຈັກແລະ ສະມາຊິກທຸກຄົນ) ແມ່ນສິ່ງນີ້: "ເພາະວ່າຄວາມຮັກຂອງພຣະຄຣິດຊົງບັງຄັບພວກເຮົາຢູ່" (2 ກຣທ 5:14 ). ຄວາມຮັກປະກອບດ້ວຍຫຍັງ? ແລະ ແມ່ນຫຍັງທີ່ຄວບຄຸມພວກເຮົາ?





ພຣະຄຣິດຊົງສະຫລະພຣະຊົນ ດ້ວຍຄວາມຮັກ, ສິ່ງນີ້ຄວບຄຸມພວກເຮົາໃຫ້ດຳເນີນຊີວິດເພື່ອພຣະອົງ (2 ກຣທ 5:14-15).

ພຣະອົງຊົງສ້າງພວກເຮົາໃຫ້ມີຊີວິດໃໝ່ ສິ່ງນີ້ຄວບຄຸມພວກເຮົາໃຫ້ລະຖິ້ມຊີວິດເກົ່າ (2 ກຣທ 5:17)

ພຣະອົງຊົງເຮັດໃຫ້ພວກເຮົາຄືນດີກັບພຣະເຈົ້າ ສິ່ງນີ້ຄວບຄຸມພວກເຮົາໃຫ້ເປັນທູດແຫ່ງການຄືນດີ (2 ກຣທ 5:18-20).





ດັ່ງນັ້ນ ຄວາມຮັກຂອງພຣະຄຣິດຈຶ່ງນຳພວກເຮົາໄປສູ່ການປ່ຽນແປງຊີວິດຢ່າງສິ້ນເຊີງ, ການດຳເນີນຊີວິດຕາມຄວາມຮັກຂອງພຣະອົງນັ້ນ ຍັງນຳພວກເຮົາໄປສູ່ການແບ່ງປັນຄວາມຮັກໃຫ້ກັບຜູ້ອື່ນ, ກະຕຸ້ນໃຫ້ພວກເຂົາຍອມຮັບເອົາຂ່າວສານແຫ່ງຄວາມຫວັງ: "ດັ່ງນັ້ນ ພວກເຮົາຈຶ່ງເປັນທູດຂອງພຣະຄຣິດ" (2 ກຣທ 5:20).

# ການຮຽກເອີ້ນສູ່ຄວາມບໍລິສຸດ



ບັນດາເພື່ອນທີ່ຮັກຂອງເຮົາເອີຍ, ເມື່ອພວກເຮົາມີພຣະສັນຍາໃໝ່ດັ່ງນີ້ແລ້ວ ຈົ່ງໃຫ້ພວກເຮົາຊຳລະຕົວຈາກທຸກສິ່ງ ທີ່ເຮັດໃຫ້ຮ່າງກາຍແລະຈິດວິນຍານເປັນມົນທິນ, ແລະ ຈົ່ງເຮັດໃຫ້ມີຄວາມບໍລິສຸດຢ່າງຄົບຖ້ວນໂດຍຄວາມຢຳເກງພຣະເຈົ້າ (2 ກຣທ 7:1)

ອຈ ໂປໂລ ໄດ້ຮວບຮວມເອົາຂໍ້ຄວາມຕ່າງໆ ຈາກພັນທະສັນຍາເດີມ ເພື່ອສະຫລຸບການຊົງຮຽກເອີ້ນໃຫ້ດຳເນີນຊີວິດຢ່າງບໍລິສຸດ (2 ກຣທ 6:16-18):

ການດຳເນີນຊີວິດຢ່າງບໍລິສຸດນັ້ນ ສົ່ງຜົນຕໍ່ຊີວິດປະຈຳວັນຂອງຜູ້ທີ່ຮັບໃຊ້ ແລະ ພີ່ນ້ອງໃນຄຣິດຕະຈັກ

- ຈົ່ງອົດທົນຕໍ່ຄວາມທຸກຍາກລຳບາກ (2 ກຣທ 6:4-5)
- ຈົ່ງເກີດຜົນຂອງພຣະວິນຍານ (2 ກຣທ 6:6)
- ຈົ່ງເປັນຄົນຊື່ສັດ ແລະ ຍຸຕິທຳ (2 ກຣທ 6:7)
- ຈົ່ງຍຶດໝັ້ນໃນທຸກໆສະຖານະການ (2 ກຣທ6:8-10)
- ຈົ່ງເປີດໃຈຂອງພວກເຮົາໃຫ້ແກ່ຜູ້ອື່ນ (2 ກຣທ 6:11-13 NIV )
- ຈົ່ງແຍກໂຕອອກຈາກອິດທິພົນ ທີ່ເປັນອັນຕະລາຍຕໍ່ຄວາມເຊື່ອ (2 ກຣທ 6:14-15)

### ການຊົງຮຽກເອີ້ນ

- ຈົ່ງອອກໄປຈາກສະຖານທີ່ແຫ່ງຄວາມບາບ
- ຈົ່ງແຍກໂຕອອກຈາກຜູ້ທີ່ຈະນຳໄປສູ່ຄວາມບາບ
- ຢ່າແຕະຕ້ອງສິ່ງທີ່ບໍ່ສະອາດ

### ຜົນທີ່ຕາມມາ

- ເຮົາຈະຢູ່ກັບພວກເຈົ້າ
- ເຮົາຈະເປັນພຣະເຈົ້າຂອງເຈົ້າ
- ພວກເຈົ້າຈະເປັນປະຊາຊົນຂອງເຮົາ
- ເຮົາຈະຍອມຮັບພວກເຈົ້າ
- ເຮົາຈະເປັນບິດາຂອງພວກເຈົ້າ

# ຜົນລັບຂອງຄວາມພະຍາຍາມ
# ຮ່ວມກັນ

# ຄວາມສະບາຍ ແລະ ຄວາມຍິນດີ

ເຮົາມີຄວາມໄວ້ໃຈ ແລະ ພາກພູມໃຈໃນພວກເຈົ້າຢ່າງຫລວງຫລາຍ, ເຮົາໄດ້ຮັບຄວາມຊູໃຈຢ່າງບໍຣິບູນ, ແລະ ໃນຄວາມທຸກລຳບາກຂອງເຮົາທຸກຢ່າງ, ເຮົາກໍຍັງມີຄວາມຊົມຊື່ນຍິນດີຢ່າງລົ້ນເຫລືອ 2 ກຣທ 7:4

ເຖິງວ່າຈະຜະເຊີນກັບບັນຫາຫລາຍຢ່າງກໍ່ຕາມ ອຈ ໂປໂລກໍ່ຍັງຍິ້ມດ້ວຍຄວາມຍິນດີ. (2 ກຣທ 7:4). ແມ່ນຫຍັງເປັນສາເຫດນີ້?

ອຈ ໂປໂລ ຂຽນຈົດໝາຍທີ່ຮຸນແຮງເຖິງຊາວໂກຣິນໂທ ເຊິ່ງເຮັດໃຫ້ພວກເຂົາຮູ້ສຶກເສົ້າໃຈ (2 ກຣທ 7:8). ແຕ່ວ່າຄວາມເສົ້າໃຈນັ້ນນຳໄປສູ່ການກັບໃຈ (2 Cor. 7:9-10). ເຊິ່ງເຮັດໃຫ້ຄວາມສຳພັນຂອງພວກເຂົາກັບ ອຈ ໂປໂລ ແລະ ກັບຄົນອື່ນໆ ປ່ຽນໄປຢ່າງສິ້ນເຊີງ (2 ກຣທ 7:11-12).













ເພາະສະນັ້ນ ທຸກຄົນຈຶ່ງໄດ້ຮັບຄວາມສຸກໃຈ (2 ກຣທ 7:7). ອຈ ໂປໂລ ໄດ້ຮັບການປອບໃຈຈາກການມາຮອດຂອງທ່ານ ຕິໂຕ (2 ກຣທ 7:6). ຊາວໂກຣິນໂທ ໄດ້ຮັບຄວາມສຸກໃຈເຊິ່ງນຳຄວາມສຸກໃຈມາສູ່ ອຈ ໂປໂລ (2 ກຣທ 7:13).

ແຕ່ ອຈ ໂປໂລ ບໍ່ໄດ້ອວດອ້າງເຖິງຄວາມດີງາມໃດໆຂອງເພິ່ນ, ຖ້າວ່າບັນດາຜູ້ລ້ຽງແກະ ແລະ ສະມາຊິກມີຄວາມສຸກ ກໍຍ້ອນພຣະເຈົ້າ, ຜູ້ເຊິ່ງ ປອບໂຍນຜູ້ທີ່ຖ່ອມໂຕ” (2 ກຣທ 7:6).

“ພັນທະກິດໝາຍເຖິງການຮັບໃຊ້, ແລະ ເຮົາທຸກຄົນຖືກຮຽກເອີ້ນໃຫ້ມາຍັງພັນທະກິດນີ້. ມັນເປັນການບໍ່ໃຫ້ກຽດພຣະເຈົ້າສໍາລັບໃຜຈັກຄົນທີ່ຈະເລືອກຊີວິດທີ່ສະແຫວງຫາຄວາມພຶງພໍໃຈຂອງຕົນເອງ. ຜູ້ທີ່ເຊື່ອໃນພຣະຄຣິດ, ທ່ານຮູ້ສຶກຫຼືບໍ່ວ່າໃນແຕ່ລະປີ ມີຈິດວິນຍານຫຼາຍພັນຫຼາຍໝື່ນຄົນ ກໍາລັງພິນາດ, ຕາຍໄປໃນບາບຂອງພວກເຂົາ ເພາະວ່າແສງສະຫວ່າງຂອງຄວາມຈິງບໍ່ໄດ້ຖືກສ່ອງໄປເຖິງເສັ້ນທາງຂອງພວກເຂົາ?”

ມີວຽກງານທີ່ຍິ່ງໃຫຍ່ຕ້ອງເຮັດໃນໂລກຂອງພວກເຮົາ. ຜູ້ຊາຍ ແລະ ຜູ້ຍິງຈະຕ້ອງໄດ້ຮັບການກັບໃຈ, ບໍ່ແມ່ນໂດຍຂອງປະທານແຫ່ງການເວົ້າພາສາຕ່າງໆ ຫຼື ໂດຍການເຮັດປາຕິຫານ, ແຕ່ໂດຍການປະກາດເລື່ອງພຣະຄຣິດຜູ້ຖືກຕຶງເທິງໄມ້ກາງແຂນ. ຍ້ອນຫຍັງຈຶ່ງເລື່ອນເວລາຄວາມພະຍາຍາມທີ່ຈະເຮັດໃຫ້ໂລກນີ້ດີຂຶ້ນ?

**EGW (Reflecting Christ, August 30)**